ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

--------------------

ເລກທີ 169 /ຫລບ.ກລຂ.

ນະຄອນຫຼວງວຽງຈັນ, ວັນທີ 27-1-2015

# ແຈ້ງການ

ຮຽນ : - ບັນດາທ່ານລັດຖະມົນຕີວ່າການກະຊວງ-ຫົວໜ້າອົງການທຽບເທົ່າ.

- ບັນດາທ່ານເຈົ້າແຂວງ ໃນຂອບເຂດທົ່ວປະເທດ ແລະ ທ່ານເຈົ້າຄອງນະຄອນຫຼວງວຽງຈັນ.

**ເລື່ອງ :** ວັນພັກຊົດເຊີຍ ວັນແມ່ຍິງສາກົນ ວັນທີ 8 ມີນາ 2015.

- ອີງຕາມກົດໝາຍ ວ່າດ້ວຍແຮງງານ ສະບັບເລກທີ 02, ລົງວັນທີ 14 ມີນາ 1994.
- ອີງຕາມ ມາດຕາ 48 ຂອງກົດໝາຍ ວ່າດ້ວຍສະຫະພັນແມ່ຍິງ ສະບັບເລກທີ 31, ລົງວັນທີ 23 ກໍລະກົດ 2013.
- ອີງຕາມ ມາດຕາ 28 ຂອງດຳລັດ ວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍແຮງງານ ສະບັບເລກທີ 98/ນຍ, ລົງວັນທີ 14 ທັນວາ 1995
- ອີງຕາມ ໃບສະເໜີ ຂອງສູນກາງສະຫະພັນແມ່ຍິງລາວ ສະບັບເລກທີ 37/ສສຍລ, ລົງວັນທີ 21 ມັງກອນ 2015.

ຫ້ອງວ່າການລັດຖະບານ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບ ດັ່ງນີ້ :

**" 1). ເນື່ອງຈາກວ່າ ວັນທີ 08 ມີນາ 2015 ເປັນມື້ພັກລັດຖະການປົກກະຕິ ( ວັນອາທິດ ) ຈຶ່ງເຫັນດີກຳນົດເອົາວັນທີ 09 ມີນາ 2015 ເປັນວັນພັກຊົດເຊີຍ ວັນແມ່ຍິງສາກົນ;**

**2). ໃຫ້ບັນດາກະຊວງ-ອົງການທຽບເທົ່າ, ບັນດາແຂວງ ແລະ ນະຄອນຫຼວງວຽງຈັນ ແຈ້ງໃຫ້ເອື້ອຍ-ນ້ອງແມ່ຍິງ ໃນຂົງເຂດທີ່ຕົນຮັບຜິດຊອບ ໄດ້ຮັບຊາບ ".**

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ປະຕິບັດຕາມເນື້ອໃນແຈ້ງການສະບັບນີ້.

ລັດຖະມົນຕີ, ຫົວໜ້າຫ້ອງວ່າການລັດຖະບານ

ສອນໄຊ ສີພັນດອນ

<u>ບ່ອນນຳສົ່ງ:</u>

- ທ່ານນາຍົກ-ຮອງນາຍົກລັດຖະມົນຕີ 06 ສະບັບ
- ຫ້ອງວ່າການສູນກາງພັກ 01 ສະບັບ
- ຫ້ອງວ່າການສະພາແຫ່ງຊາດ 01 ສະບັບ
- ສູນກາງສະຫະພັນແມ່ຍິງລາວ 01 ສະບັບ
- ເກັບມ້ຽນ 10 ສະບັບ

ພາສີ ພົມມະກອນ